ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ ເລກທີ 028 /ນຍ

ນະຄອນຫລວງວຽງຈັນ, ວັນທີ 03.02.2009

# ດຳລັດ
# ຂອງນາຍົກລັດຖະມົນຕີ
# ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້
# ນະໂຍບາຍແຫ່ງຊາດ ວ່າດ້ວຍຄວາມປອດໄພຂອງອາຫານ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍອາຫານ ສະບັບເລກທີ 04/ສພຊ, ລົງວັນທີ 15 ພຶດສະພາ 2004;
- ອີງຕາມ ມະຕິຕົກລົງຂອງກອງປະຊຸມລັດຖະບານ ປະຈຳເດືອນກັນຍາ 2008;
- ອີງຕາມ ການສະເໜີຂອງ ລັດຖະມົນຕີວ່າການ ກະຊວງສາທາລະນະສຸກ.

## ນາຍົກລັດຖະມົນຕີແຫ່ງ ສປປ ລາວ ອອກດຳລັດ:

**ມາດຕາ 1:** ຮັບຮອງ `ແລະ ປະກາດໃຊ້ ນະໂຍບາຍແຫ່ງຊາດ ວ່າດ້ວຍຄວາມປອດໄພຂອງອາຫານ ທີ່ລັດຖະມົນຕີຊ່ວຍວ່າການ ກະຊວງສາທາລະນະສຸກ ໄດ້ລົງລາຍເຊັນ ເລກທີ 020/ກຊສ, ລົງວັນທີ 13 ມັງກອນ 2009.

**ມາດຕາ 2:** ມອບໃຫ້ກະຊວງສາທາລະນະສຸກ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງເຜີຍແຜ່ຂະຫຍາຍ ແລະ ປະຕິບັດນະໂຍບາຍແຫ່ງຊາດດັ່ງກ່າວ ໃຫ້ປະກົດຜົນເປັນຈິງ.

**ມາດຕາ 3:** ບັນດາກະຊວງ, ອົງການທຽບເທົ່າ, ອົງການຈັດຕັ້ງມະຫາຊົນ, ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4:** ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ທຸກຂໍ້ກຳນົດ ແລະ ລະບຽບການຕ່າງໆທີ່ປະກາດໃຊ້ໃນເມື່ອກ່ອນ ທາກຂັດກັບດຳລັດສະບັບນີ້ ແມ່ນໃຫ້ຍົກເລີກ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ